# ຂໍໃຫ້ຮູ້ຂໍໃຫ້ເຂົ້າໃຈວ່າ ຊີວິດເກີດມາມີແຕ່ທຸກຂ໌

ທຸກຄົນເກີດມາໃນໂລກໜ່ວຍນີ້ ລ້ວນແລ້ວແຕ່ມີທຸກຂ໌ ທຸກຂ໌ໜັກທຸກຂ໌ໜານຳກັນ ທຸກຂ໌ຍ້ອນວ່າ ເກີດມາແລ້ວມີຄວາມປ່ຽນແປງ ປ່ຽນຈາກເກົ່າໄປເປັນໃໝ່ ປ່ຽນຈາກທີ່ເຄີຍເປັນ ຈາກນ້ອຍມາເປັນໃຫຍ່ ຈາກບໍ່ຮູ້ເລື້ອງ ມາຮູ້ເລື້ອງ ຈາກບໍ່ຮູ້ຄິດມາຮູ້ຄິດ ຈາກຊີວິດທີ່ລົ້ມລຸກຄຸກຄານ ມາເປັນຊີວິດໃຫຍ່ ຊີວິດໃຫຍ່ຂຶ້ນທຸກວັນທຸກວັນ ໃຫຍ່ຂຶ້ນ ຍ້ອນໄດ້ກິນເຂົ້າປາອາຫານ ນ້ຳດື່ມ, ພໍໃຫຍ່ຂຶ້ນມາແລ້ວ ກໍຍອມຮັບຕົນເອງໄດ້ຍາກ ຍ້ອນວ່າ ຮູ້ຈັກເໝັນ ຮູ້ຈັກສາບ ຮູ້ຈັກຄາວ ແມ່ນຢູ່ວ່າຕົນໂຕເຈົ້າຂອງ ແຕ່ວ່າພໍຮູ້ທັງຮູ້ ວ່າເຈົ້າຂອງມີຂີ້ຢູ່ໃນ ແລ້ວກໍຕ້ອງທອນເທ ແບບບໍ່ພໍໃຈ ແບບບໍ່ເຕັມໃຈ ແຕ່ກໍຕ້ອງໄດ້ຍອມຮັບ ເຖິງແມ່ນວ່າຍອມຮັບ ກໍຕ້ອງເຂົ້າໃຈວ່າ ແມ່ນຢູ່ວ່າກາຍຂອງເຮົາ ແຕ່ຕ້ອງໄດ້ຢືມເຂົາ ຢືມເຂົາເຂົ້າມາ ຢືມເຂົ້າມາທຸກວັນ ທຸກວັນຢືມເຂົ້າມາ, ວັນນີ້ກໍຢືມ ວັນໜ້າກໍຕ້ອງໄດ້ຢືມ ວັນຕໍ່ໄປກໍຕ້ອງໄດ້ຢືມ ຢືມແລ້ວກໍຕ້ອງໄດ້ຢືມອີກ ຢືມຕໍ່ໆໄປ ຢືມທັງໝົດຕະຫຼອດຊາດ ຊາດນີ້ງໆກໍຕ້ອງເປັນແບບນີ້ ເປັນແບບບໍ່ມີໃຜປາຖະໜາ ແບບນີ້ແບບບໍ່ມີໃຜປາຖະໜາ ມີແຕ່ກົ້ມໜ້າຍອມຮັບຊາຕາກັມ, ຮັບແລ້ວກໍຕ້ອງໄດ້ຮັບອີກ ຮັບອີກຕໍ່ໆໄປ ຮັບຕໍ່ໆກັນໄປຮັບແບບບໍ່ຈົບບໍ່ສິ້ນ ຮັບແລ້ວຮັບອີກ ຕົກຊົ່ວລູກຊົ່ວຫຼານ ພໍ່ພຣະແມ່ພຣະຜູ່ຢູ່ໃນເຫັນແລ້ວກໍສະຫຼົດໃຈ ສະຫຼົດສັງເວດນຳ ນຳຜູ່ເປັນກາຍ ຜັດປ່ຽນກັນເຂົ້າ ແລ້ວກໍຜັນແປປ່ຽນແປງ, ກິນເຂົ້າໄປແລ້ວ ກໍປ່ຽນແປງເປັນແນວໃໝ່ ຄືດວ່າເປັນໂຕຂອງເຮົາ ແຕ່ກໍເປັນໄປບໍ່ໄດ້ ເປັນໄດ້ແຕ່ພຽງຢືມກັນຊົ່ວຄູ້ຊົ່ວຄາວ ເວລາທີ່ຜ່ານໄປ ຊີວິດໃຜ ໃຜກໍຕ້ອງຮູ້ ແຕ່ວ່າຜູ່ທີ່ຮູ້ແທ້ຮູ້ຈິງ ກໍຄືຜູ່ເປັນພຣະ ພຣະພໍ່ພຣະແມ່ ພຣະບິດາ ພຣະມາຣດາ ພຣະພຸທ ພຣະທັມ ພຣະສົງຄ໌ ພຣະຣັຕນະຕຣັຍ ແກ້ວທັງສາມ ນີ້ຄືຜູ່ຢູ່ໃນກາຍຂອງເຮົາ ເຮົາເກີດມາ ຍ້ອນໄດ້ອາສັຍພວກນີ້ ພວກນີ້ເປັນຝ່າຍພຣະ ຝ່າຍພຣະນີ້ ຮູ້ ແລະເຂົ້າໃຈ ເຂົ້າໃຈທັງໝົດທຸກເລື້ອງ ທຸກເຫດການ ແລະທຸກໆເຫດການ, ຊີວິດຂອງຜູ່ເປັນພຣະ ແສນທົນທຸກຂ໌ທໍລະມານ ແສນທໍລະມານທີ່ສຸດ ສຸດໆຂອງຄວາມທໍລະມານ ຍາກເຫຼືອເກີນ ທຸກຂ໌ເຫຼືອເກີນ ລຳບາກເຫຼືອເກີນ ຍາກຈົນເກືອບວ່າ ຫາອັນໃດປຽບບໍ່ມີ ຈະປຽບຈະທຽບໃຫ້ຟັງ ບໍ່ຈັກຈະປຽບໃສ່ອັນໃດ, ຍາກບ່ອນວ່າ ຜີເຈົ້ານັ້ນເຈົ້ານີ້ກໍເຂົ້າໄປນາບໄປຂູ່ ໄປບຽດບຽນ ໄປຂົ່ມເຫັງ ຂົ່ມເຫັງແລ້ວຂົ່ມເຫັງອີກ ຂົ່ມເຫັງແບບ ສຸດໆ ແບບວ່າບໍ່ໃຫ້ເງີຍຫົວເງີຍຄໍໄດ້ ຍ້ອນວ່າເຂົາມີສິດ ເຂົາມີສິດຍ້ອນຄົນເຮົາຜູ່ເປັນກາຍບໍ່ເຂົ້າໃຈ ໄປເອົາເຂົາມາຖື ໄປເອົາເຂົາມາຮັກສາ ໄປໄຫວ້ວອນເອົາເຂົາມາ ໃນເມື່ອເຂົາມາແລ້ວ ເຂົາກໍຕ້ອງກຳຈັດໃຫ້ພຣະຢູ່ໃນກາຍເຈົ້າຂອງ ກາຍເປັນທາສຂອງເຂົາ ແລະເຂົາກໍລາກແກ່ໄປ ໄປຕາມອຳນາດໃຈຂອງເຂົາ ເຂົາເປັນພຽງ ແຕ່ເຊື້ອວິນຍານ ແຕ່ພາກັນໄປເອີ້ນເອົາເຂົາ ເອີ້ນເອົາເຂົາເຂົ້າມາ ເພື່ອໃຫ້ມາທຳລາຍພຣະຢູ່ໃນກາຍເຈົ້າຂອງ ພຣະຜູ່ຢູ່ໃນກາຍເຈົ້າຂອງກໍຕ້ອງຢູ່ໃນກອບອຳນາດຂອງເຂົາ ແລ້ວເຂົາກໍລາກແກ່ໄປທັ້ນໄປນີ້ ຊີວິດຂອງຜູ່ເປັນພຣະ ທຸກຂ໌ໃນເລື້ອງນີ້ກໍທຸກຂ໌ ທຸກຂ໌ໃນເລື້ອງອື່ນໆຍັງມີອີກ ກໍຄືເລື້ອງຮ້າຍ ເລື້ອງຄຽດ ເລື້ອງກຸ້ມອົກກຸ້ມໃຈ ເລື້ອງເສັຍອົກເສັຍໃຈ ເລື້ອງເວົ້າໃຫ້ຜູ່ນັ້ນ ເລື້ອງເວົ້າໃຫ້ຜູ່ນີ້ ເລື້ອງເວົ້າບໍ່ຄິດ ເລື້ອງເວົ້າບໍ່ຖືກ ເລື້ອງເວົ້າບໍ່ຈິງ ເລື້ອງເວົ້າບໍ່ແມ່ນ ທັງເລື້ອງເວົ້າ ທັງເລື້ອງຄິດ ທັງເລື້ອງທຳ ພາໃຫ້ທາງຜູ່ເປັນພຣະເໝີດໂອກາດຢູ່ຕະຫຼອດ ເໝີດໂອກາດແລ້ວ ເໝີດໂອກາດອີກ. ຊີວິດຂອງຜູ່ເປັນພຣະຢູ່ໃສ? ຮູ້ຈັກບໍ?

ຢູ່ໃນບ່ອນທ້ອງນ້ອຍ ຢູ່ໃນກະເປົາຖ່າຍ ຢູ່ໃນກະເປົາຂອງເກົ່າ ແລະຂອງໃໝ່ ທີ່ກິນເຂົ້າໄປ ຢູ່ໃນກະເປົາມູນ ມູນທາງຝ່າຍຕ່ຳ ມູນນາລິກາ ນາລິກາທັງເປັນ ນາລິກາຮັກເຮືອ ນີ້ແລ້ວຄືບ່ອນພຣະຢູ່! ບ່ອນພຣະຢູ່ແທ້ໆ ສ່ວນຫຼວງຫຼາຍແມ່ນຢູ່ບ່ອນນີ້!

ສົງສານຫຼືບໍ່? ສົງສານຜູ່ເປັນພຣະ ຢູ່ໃນກາຍເຈົ້າຂອງຢູ່ບໍ? ຖ້າສົງສານ ກໍຂໍໃຫ້ພາກັນໄຫວ້ພຣະ ພາວະນາ ເຮັດໃນທາງຈະເລີນ ເຮັດໃນທາງດີ ທາງຖືກ ທາງຊອບ ເຮັດໃນທາງປະກອບຊອບທັມ ເຮັດໃນທາງຖືກ ກໍຄືເຮັດແບບວ່າ ເອົາໃຈໃສ່ຈະເລີນສະຕິ ຈະເລີນສະມາທິ ຈະເລີນປັນຍາ ຈະເລີນວິຊາ ເພື່ອໃຫ້ໄດ້ແສງສະຫວ່າງ ເພື່ອໃຫ້ເກີດຄວາມຮູ້ແຈ້ງ ແຈ້ງຢູ່ແຫ່ງພາຍໃນເຈົ້າຂອງ ເພື່ອໃຫ້ຮູ້ວ່າອັນໃດເປັນອັນໃດ? ຄືອັນໃດ? ແບບໃດ? ຄືແນວໃດກັນແທ້? ຄືຄົນ ຫຼືຄືທາດ? ຕາມຄວາມເປັນຈິງ ເຮົາຄືທາດ ໂຕເຮົາເປັນທາດ ຕາມທັມມະຊາດເທົ່ານັ້ນເອງ ເຮົາເປັນພຽງແຕ່ທາດດິນ ທາດນ້ຳ ທາດໄຟ ທາດລົມເທົ່ານັ້ນ, ສ່ວນທາດອາກາດ ແມ່ນສ່ວນເພີ້ມ ເພີ້ມເຂົ້າກັນແລ້ວຈິ່ງເກີດເປັນວິນຍານ ວິນຍານທາດ ເຮົາມີວິນຍານ ວິນຍານຂອງເຮົາມີ ມີຈິງ ແຕ່ຕາແນມບໍ່ເຫັນ ແຕ່ວ່າເຮົາຕ້ອງເຂົ້າໃຈດ້ວຍຕົວເຮົາເອງ ດ້ວຍຕົວເຮົາບອກເຮົາ ເຮົາຈິ່ງຈະຮູ້ເຂົາ ຂໍໃຫ້ເຂົ້າໃຈຕາມນີ້ໄວ້.

ເຊື່ອກໍດີ ບໍ່ເຊື່ອກໍດີ ດີທັງສອງ ເພາະວ່າການເຊື່ອ ກໍຕ້ອງໄດ້ຄົ້ນຄວ້າເບິ່ງ ຄົ້ນຄວ້າເບິ່ງເອງ ແລະການເຊື່ອກໍແລ້ວໄປ ບໍ່ເມື່ອຍ ບໍ່ເພັຍ ບໍ່ຄືຜູ່ເຊື່ອ ເພາະວ່າຜູ່ເຊື່ອ ຕ້ອງໄດ້ພິນິດພິຈາລະນາຢ່າງສູງ ຕ້ອງໄດ້ເອົາຕົນເປັນທີ່ເພິ່ງ ຕົນຕ້ອງໄດ້ເພິ່ງຕົນ ຕົນຕ້ອງໄດ້ປຶກສາຫາລືກັບຜູ່ນັ້ນ ກັບຜູ່ນີ້ ເພື່ອຮູ້ເພື່ອແຈ້ງຕື່ມ ເພື່ອຮູ້ເພື່ອແຈ້ງຂຶ້ນເປັນລຳດັບ ເພື່ອໃຫ້ເຂົ້າໃຈເຖິງພຣະທັມ ເພື່ອໃຫ້ໄດ້ພຣະທັມຂຶ້ນມາເປັນທີ່ເພິ່ງ ເພິ່ງຕົນກ່ອນ ຕໍ່ໄປເພິ່ງພຣະທັມ ຕໍ່ໄປອີກ ບໍ່ຕ້ອງສົງໄສຫຍັງອີກແລ້ວ.

ວັນທີ **12/12/2015**, ເວລາ **16:13-16-58** ໂມງ, ໃຊ້ເວລາຈົດຂຽນໄວ້ **45** ນາທີ

**ຜູ່ຮັບຈົດຂຽນ ແລະ ຕີພິມໄວ້ຈາກແມ່ພຣະ ດຣ. ມະນີສົດ ແກ້ວດາລາ**

ໂທລະສັບ:**(+856-20) 2222 8489,** E-mail: manisothk@gmail.com;